# ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 1 ກັນຍາ 2024 (09-01-2024)

---

## ຈຸດປະສົງທີ່ຖືກສົງສັຍ

**ຈຸດສຳຄັນໃນບົດຮຽນ:** ແຍກຫ່າງຈາກພຣະເຈົ້າ, ຊີວິດບໍ່ມີຄວາມໝາຍ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ຊີວິດສ່ວນໃຫຍ່ສາມາດມີຄວາມຮູ້ສຶກຄືກັບກົງລໍ້ຂອງໂຕແຮມສເຕີ (hamster).

- ຜູ້ຂາຍຄວ້າເອົາຂໍ້ຕົກລົງ, ພຽງແຕ່ຈະໝູນກົງລໍ້ນັ້ນອີກຄັ້ງເພື່ອຊອກຫາລູກຄ້າອີກຄົນ.
- ຜູ້ເຮັດອາຫານທີ່ສົ່ງອອກຈານແລ້ວຈານເລົ່າ, ພຽງແຕ່ທຳຄວາມສະອາດເຕົາໄຟແລະເລີ່ມຕົ້ນໃໝ່ອີກໃນມື້ອື່ນ.
- ທ່ານໄດ້ຕັດຫຍ້າເດີ່ນບ້ານ, ພຽງແຕ່ຕ້ອງເຮັດທັງໝົດອີກເທື່ອນຶ່ງໃນອາທິດໜ້າ.
- ທ່ານທຳຄວາມສະອາດເຮືອນຢ່າງລະອຽດ, ແຕ່ກ່ອນທີ່ຈະມ້ຽນເຄື່ອງທຳຄວາມສະອາດ, ຂີ້ຝຸ່ນໄດ້ເລີ່ມຕົ້ນກັບຄືນມາແລ້ວ.

ໃຫ້ເຮັດສິ່ງນີ້ດົນພໍແລະທ່ານອາດຈະສົນໃຈຕໍ່ຄຳຖາມທີ່ມັກຫຼາຍໃນຖ້ານກາງເດັກນ້ອຍອາຍຸສາມປີ: "ເປັນຫຍັງ?" ຂນະທີ່ເດັກນ້ອຍເລັງຄຳຖາມຂອງລາວຕໍ່ທຸກຄົນ, ໃນຖານະທີ່ເປັນຜູ້ໃຫຍ່, ພວກເຮົາສ່ວນໃຫຍ່ມັກຖາມຕົວເອງວ່າ. "ເປັນຫຍັງຂ້ອຍຈຶ່ງເຮັດສິ່ງນີ້? ທັງໝົດນີ້ເພື່ອຫຍັງ?" ທ່ານສາມາດມາເຖິງທີ່ສຸດຂອງຊີວິດທ່ານດ້ວຍຄຳວ່າ “ເປັນຫຍັງ” ຂອງເດັກອາຍຸສາມປີ " ຍັງດັງກ້ອງຢູ່ໃນຫົວຂອງທ່ານ. ຄວາມເຄັ່ງຄັດຂອງວົງລໍ້ແຮມສເຕີສາມາດເຮັດໃຫ້ທ່ານມືດມົວມະໂນພາບຕໍ່ຄວາມຈິງທີ່ວ່າຊີວິດຂອງທ່ານມີຈຸດປະສົງ, ແຕ່ຈຸດປະສົງນັ້ນຈະບັນລຸໄດ້ພຽງແຕ່ເມື່ອທ່ານຫຼຽວເບິ່ງຜູ້ທີ່ໃຫ້ຈຸດປະສົງນັ້ນແກ່ທ່ານ. ດັ່ງທີ່ກະສັດໂຊໂລໂມນໄດ້ຄົ້ນພົບວ່າ, ການຊອກຫາໃນບ່ອນອື່ນອີກສຳລັບຈຸດປະສົງຂອງທ່ານແມ່ນບໍ່ມີຄວາມໝາຍ

*ແມ່ນຫຍັງທີ່ທ່ານເບື່ອທີ່ເຮັດຊ້ຳແລ້ວຊ້ຳອີກ?*

**ພຣະຄັມພີກ່າວວ່າຢ່າງໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

## <u>ສຶກສາພຣະຄັມພີ</u>

1. **ປັນຍາຈານ 1:1-7.**

*1. ຖ້ອຍຄຳຂອງປັນຍາຈານຜູ້ເປັນລູກຊາຍຂອງດາວິດກະສັດໃນເຢຣູຊາເລັມ. 2. ປັນຍາຈານກ່າວວ່າບໍ່ເປັນປໂຍດ ບໍ່ໄດ້ຜົນ ສາລະພັດລ້ວນແຕ່ບໍ່ໄດ້ຜົນ. 3. ມະນຸດຮັດວຽກໜັກຈົນໝົດເຫື່ອແຮງພາຍໃຕ້ດວງຕາເວັນ ລາວໄດ້ປໂຍດຫຍັງຈາກງານທັງໝົດທີ່ລາວເຮັດນັ້ນ? 4. ຊົ່ວອາຍຸນຶ່ງລ່ວງໄປ ແລະອີກຊົ່ວອາຍຸນຶ່ງກໍມາ ແຕ່ແຜ່ນດິນໂລກຍັງຄົງເດີມຢູ່ເປັນນິດ. 5. ດວງຕາເວັນຂຶ້ນແລະດວງຕາເວັນຕົກແລ້ວຮີບໄປເຖິງບ່ອນຊຶ່ງມັນຂຶ້ນມານັ້ນ. 6. ລົມພັດໄປທາງໃຕ້ແລ້ວວຽນກັບໄປທາງເໜືອ ລົມພັດວຽນໄປວຽນມາແລ້ວລົມກໍພັດກັບຕາມທາງວຽນຂອງມັນ. 7. ແມ່ນ້ຳທັງຫຼາຍໄຫຼໄປສູ່ທະເລແຕ່ທະເລກໍບໍ່ເຕັມ ແມ່ນ້ຳໄຫຼໄປສູ່ບ່ອນໃດກໍໄຫຼໄປສູ່ບ່ອນນັ້ນອີກ.*

"ໄຮ້ປໂຍດແທ້ໆ" (ຂໍ້ 1). ເຄີຍເວົ້າບໍ່? ບາງທີທ່ານອາດເຄີຍເວົ້າມັນເມື່ອວຽກງານຮູ້ສຶກວ່າ "ສອງກ້າວໄປຂ້າງໜ້າ, ສາມກ້າວກັບຄືນຫຼັງ." ຫຼືໃນເວລາທີ່ເມື່ອສາຍສັມພັນໄປທາງບໍ່ດີແລ້ວ, ຫຼືແຜນການຕ່າງໆຖືກບິດເບືອນ. ເມື່ອຊີວິດບໍ່ເປັນໄປຕາມທີ່ເຮົາຫວັງໄວ້, ພວກເຮົາສາມາດຮ້ອງອອກມາໃນຄວາມທຸນທວຍວ່າ, “ມັນແມ່ນຫຍັງ?”

*ຮູບພາບໃດໃນຂໍ້ເຫຼົ່ານີ້ດຶງດູດຄວາມສົນໃຈຂອງທ່ານ?*

ຂ້າພະເຈົ້າຈະບໍ່ຄາດຫວັງໃຫ້ຄົນເຊັ່ນກະສັດໂຊໂລໂມນຮູ້ສຶກແບບນັ້ນ. ຫຼັງຈາກທັງໝົດນີ້, ໂຊໂລໂມນເປັນບຸກຄົນທີ່ສລາດທີ່ສຸດໃນໂລກ. ພຣະເຈົ້າໄດ້ໃຫ້ “ຄວາມຄິດສລຽວສລາດແລະມີຄວາມເຂົ້າໃຈ, ທີ່ບໍ່ເຄີຍມີຜູ້ໃດມີມາກ່ອນ ແລະຈະບໍ່ມີໃຜມີຄືເຈົ້າອີກ” (1 ກະ

ສັດ 3:12). ບໍ່ພຽງແຕ່ເທົ່ານັ້ນ, ແຕ່ພຣະເຈົ້າຍັງໄດ້ມອບ "ຄວາມຮັ່ງມີແລະກຽດສັກສີ, ດັ່ງນັ້ນບໍ່ມີກະສັດ [ຂອງພຣະອົງ] ເທົ່າຫຽມກັນຕລອດຊີວິດຂອງລາວ" (ຂໍ້ 13). ໂຊໂລໂມນບໍ່ໄດ້ຂີ້ຖີ່ກັບສິ່ງທີ່ລາວມີ; ລາວຂ້ອນຂ້າງມີໃຈກວ້າງກັບສະຕິປັນຍາຂອງລາວ. ຈົ່ງພິຈາລະນາສະຕິປັນຍາທັງໝົດທີ່ລາວໄດ້ແບ່ງປັນໃນພຣະທັມສຸພາສິດ, ຄວາມຈິງທີ່ໃຫ້ກຳລັງໃຈແລະຄວາມເຂົ້າໃຈຫຼາຍເພື່ອເອົາປໂຍດສູງສຸດຈາກຊີວິດ. ນັ້ນຄືເຫດຜົນທີ່ຂ້າພະເຈົ້າຮູ້ສຶກແປກໃຈໃນຕອນທຳອິດທີ່ໄດ້ອ່ານຄຳກ່າວຂອງໂຊໂລໂມນທີ່ວ່າບໍ່ມີປໂຍດ, ຖ້າໂຊໂລໂມນ, ດ້ວຍສະຕິປັນຍາແລະຄວາມຮັ່ງມີຂອງລາວ, ໄດ້ຍອມແພ້ໃນການຊອກຫາຈຸດປະສົງຫຼືຄວາມໝາຍໃນຊີວິດ, ພວກເຮົາຈະມີຄວາມຫວັງອັນໃດ? ແຕ່ເນື່ອງຈາກໂຊໂລໂມນມີສະຕິປັນຍາຫຼາຍແທ້ໆ ຈົ່ງພິຈາລະນາວ່າເປັນຫຍັງລາວຈຶ່ງເວົ້າແບບນີ້. ໂຊໂລໂມນໄດ້ເລີ່ມຕົ້ນພຣະທັມປັນຍາຈານດ້ວຍຄຳຖາມທີ່ສຳຄັນວ່າ: “ຄົນໄດ້ຮັບຫຍັງຈາກຄວາມພຍາຍາມທັງໝົດທີ່ລາວອອກແຮງຢູ່ໃຕ້ແສງຕາເວັນ?” (1:3). ກຸນແຈທີ່ຈະເຂົ້າໃຈບ່ອນທີ່ໂຊໂລໂມນກຳລັງນຳພວກເຮົາຢູ່ໃນໜັງສືເຫຼັ້ມນີ້ແມ່ນປໂຍກທີ່ວ່າ "ພາຍໃຕ້ແສງຕາເວັນ." ຊີວິດທີ່ມີຊີວິດຢູ່ "ພາຍໃຕ້ແສງຕາເວັນ" (ຂໍ້ 3) ແມ່ນຊີວິດທີ່ຫ່າງໄກຈາກພຣະເຈົ້າ. ມັນເປັນຊີວິດທີ່ເບິ່ງຜ່ານທັສນະຂອງຄົນທີ່ເຊື່ອວ່າບໍ່ມີຫຍັງຢູ່ເໜືອດວງອາທິດ, ໃນສວັນ. ການດຳເນີນຊີວິດພຽງແຕ່ມີທັສນະຂອງ "ພາຍໃຕ້ແສງຕາເວັນ" ເທົ່ານັ້ນແມ່ນການດຳເນີນຊີວິດໂດຍບໍ່ມີການຄຳນຶງເຖິງພຣະເຈົ້າ. ຜູ້ທີ່ຢູ່ເໜືອດວງອາທິດ. <u>ແລະໂດຍບໍ່ຄຳນຶງເຖິງພຣະເຈົ້າ, ພວກເຮົາຈະພາດການຊອກຫາຈຸດປະສົງຫຼືຄວາມໝາຍໃດໆໃນຊີວິດ.</u> ໂລກຂອງພວກເຮົານີ້ສັນຍາເຣື່ອງຄວາມສຸກຢ່າງຕໍ່ເນື່ອງຖ້າພວກເຮົາຫາກຍອມຮັບກັບສິ່ງທີ່ມັນມີໃຫ້. ພວກເຮົາຫຼາຍໆຄົນໄລ່ຕິດຕາມສິ່ງທີ່ຢູ່ໃນໂລກນີ້. ພວກເຮົາຕື່ມເຕັມໃສ່ຊີວິດແລະຈິດໃຈຂອງພວກເຮົາກັບສິ່ງທີ່ "ພາຍໃຕ້ແສງຕາເວັນ," ໃນຄວາມຫວັງວ່າຈະຍູ້ອອກຈາກຄວາມຄິດຕ່າງໆທີ່ໄຮ້ປໂຍດ. ພວກເຮົາສາມາດພຍາຍາມປິດບັງມັນ, ແຕ່ພາຍໃຕ້ມັນທັງໝົດຍັງເປັນຄວາມຄິດທີ່ວ່າ: "ໄຮ້ປໂຍດແທ້ໆ (ຂໍ້ 1). ໃນທີ່ສຸດພຣະເຈົ້າໄດ້ເປີດເຜີຍພຣະອົງເອງໃນພຣະເຢຊູ (ເຮັບເຣີ 1:1-4). ຈາກທັສນະຂອງຜູ້ຕິດຕາມພຣະຄຣິດ, ຄຳຖາມປ່ຽນເປັນ: "ນອກຈາກພຣະຄຣິດ, ຄວາມຈິງແລ້ວພວກເຮົາໄດ້ຮັບຫຍັງຈາກການທັງໝົດທີ່ພວກເຮົາໄດ້ເຮັດໃນຊີວິດນີ້?" ແຕ່ເຖິງວ່າເປັນຄຣິສະຕຽນເຮົາກໍຍັງສາມາດຕໍ່ສູ້ກັບຊີວິດປະຈຳວັນຂອງເຮົາທີ່ເບິ່ງຄືວ່າໄຮ້ປໂຍດ. ພວກເຮົາມີຊີວິດຢູ່ແລະພວກເຮົາເສັຽຊີວິດ, ລຸ້ນຄົນມາແລະຜ່ານໄປ, ແຕ່ວ່າແຜ່ນດິນໂລກສືບຕໍ່ດຳເນີນການໂດຍຜ່ານວົງຈອນທັມມະຊາດທີ່ຊໍ້າຊ້ອນຂອງມັນ. ໂຊໂລໂມນໄດ້ໃຊ້ຕົວຢ່າງສາມຢ່າງຈາກທັມມະຊາດ: **(1)** ຊີວິດສາມາດເບິ່ງຄືວ່າເປັນວົງຈອນຊໍ້າຊ້ອນຂອງດວງອາທິດ. "ຕາເວັນຂຶ້ນແລະຕາເວັນຕົກ" (ປຍຈ 1:5). ຂຶ້ນແລະລົງ, ແລະມັນກັບຄືນໄປຫາສະຖານທີ່ຂອງມັນຢ່າງຮີບດ່ວນສເມີ. ທ່ານເຮັດວຽກໜັກຕລອດບໍ, ແຕ່ຮູ້ສຶກວ່າທ່ານຈະຈົບລົງຢູ່ບ່ອນໃດ? **(2)** ຊີວິດສາມາດເບິ່ງຄືວ່າເປັນກະແສລົມທີ່ບໍ່ມີທິດທາງ. ລົມພັດໄປອ້ອມຮອບໂດຍບໍ່ມີຈຸດປະສົງຫຼືທິດທາງທີ່ຈະແຈ້ງ. ເຄີຍຮູ້ສຶກບໍ່ວ່າທ່ານຈະໄປໄວເທົ່າໃດ, ທ່ານໄປຮອດໃສບໍ? **(3)** ຊີວິດສາມາດເບິ່ງຄືວ່າເປັນການໄຫຼຂອງແມ່ນໍ້າທີ່ບໍ່ມີວັນສິ້ນສຸດໄປສູ່ທະເລ. ແມ່ນໍ້າແລະສາຍນໍ້າຍັງສືບຕໍ່ໄຫຼລົງສູ່ທະເລໂດຍບໍ່ເຄີຍເຕັມເລີຍ. ມັນມັກຈະຮູ້ສຶກວ່າທ່ານເຮັດວຽກໜັກໃນບາງວຽກທີ່ທ່ານບໍ່ເຄີຍສຳເລັດບໍ? ຖ້າທ່ານເຄີຍຮູ້ສຶກວ່າຊີວິດຂອງທ່ານບໍ່ມີຈຸດໝາຍ. ລໍກ່ອນ. **ມັນກຳລັງຈະຮ້າຍແຮງຂຶ້ນກ່ອນທີ່ມັນຈະດີຂຶ້ນ.**

*ເປັນຫຍັງຫຼາຍຄົນຈຶ່ງຮູ້ສຶກບໍ່ພໍໃຈ, ບໍ່ວ່າເຂົາເຈົ້າຈະເຮັດສຳເລັດຫຼາຍປານໃດ?*

## 2. ປັນຍາຈານ 1:8-10.

*8. ສາລະພັດ ນຳໄປສູ່ຄວາມເບື່ອໜ່າຍ ແມ່ນໃຜກໍເວົ້າບໍ່ອອກ ຕາກໍເບິ່ງບໍ່ອີ່ມຫລືຫູກໍຟັງບໍ່ເຕັມ. 9. ສິ່ງທີ່ເປັນຂຶ້ນແລ້ວຄືສິ່ງທີ່ຈະເປັນຂຶ້ນອີກ ສິ່ງທີ່ເຮັດແລ້ວຄືສິ່ງທີ່ຈະຕ້ອງເຮັດອີກ ແລະບໍ່ມີສິ່ງໃດໃໝ່ພາຍໃຕ້ດວງຕາເວັນ. 10. ມີອັນໃດແດ່ທີ່ເຂົາຈະເວົ້າໄດ້ວ່າ “ເບິ່ງແມ ສິ່ງນີ້ໃໝ່” ສິ່ງນັ້ນມີຢູ່ແລ້ວໃນສມັຍກ່ອນເຮົາທັງຫຼາຍ.*

ມັນກໍບໍ່ດີພໍຢູ່ແລ້ວ ວ່າສິ່ງທີ່ພວກເຮົາເຮັດໃນຊີວິດຮູ້ສຶກວ່າບໍ່ມີຈຸດໝາຍ, ແຕ່ການຕິດຕາມຫາສິ່ງນັ້ນເຮັດໃຫ້ພວກເຮົາເມື່ອຍລ້າ. ບໍ່ວ່າເຮົາຈະພຍາຍາມປະສົບການຫຼືເປັນເຈົ້າຂອງອັນໃດກໍຕາມ, ພວກເຮົາກໍເມື່ອຍລ້າແລະຍັງບໍ່ລົມໃຈ.

- ບໍ່ວ່າຕາຂອງທ່ານເຫັນຫຼາຍປານໃດ, ທ່ານກໍຈະບໍ່ລົມໃຈ. ພວກເຮົາທຸກຄົນໄດ້ເຫັນສິ່ງຕ່າງໆທີ່ຖອນລົມຫາຍໃຈຂອງພວກເຮົາອອກໄປໄດ້, ຂ້າພະເຈົ້າມີໂອກາດເຂົ້າໄປເບິ່ງບາງສະຖານທີ່ທີ່ສຸດຍອດ, ເຊັ່ນ ກແຣນ ແຄນນຽນ (Grand Canyon), ນໍ້າຕົກ ນາຍ

ກາຣາ (Niagara Fall), ແລະ ຝາກຳແພງເມືອງຈີນ (Great Wall of China). ບາງທີທ່ານເຄີຍເຫັນຮູບແຕ້ມໂມເນັດ (Monet) ທີ່ມີຊື່ສຽງໃນພິພິທພັນສິລະປະທີ່ ເມຕໂຣ ໂປລີແຕັນ (Metro polytan) ຫຼື ໂມນາ ລີຊາ (Mona Lisa) ມີຄວາມສວຍງາມຢູ່ອ້ອມຮອບຕົວເຮົາ, ແຕ່ທຸກສິ່ງທີ່ເຫັນອັນສງ່າງາມຂອງການຊົງສ້າງຂອງພຣະເຈົ້າ ແລະຮູບແຕ້ມທີ່ງົດງາມ, ຕຶກອາຄານ, ສວນ, ແລະສິ່ງມະຫັສຈັນຂອງໂລກຍັງເຮັດໃຫ້ພວກເຮົາບໍ່ພໍໃຈ.

- **ບໍ່ວ່າຫູຂອງທ່ານໄດ້ຍິນຫຍັງ, ທ່ານຍັງຈະບໍ່ພໍໃຈ.** ຂ້າພະເຈົ້າບໍ່ຮູ້ວ່າທ່ານອາດຈະໄດ້ພິຈາລະນາດົນຕີທີ່ເຂົ້າຫູຂອງທ່ານ, ບາງທີມັນອາດຈະເປັນສຽງຂອງສັດປ່າໃນເວລາທີ່ທ່ານອອກໄປໃນທັມມະຊາດ, ສຽງເປາະແປະຂອງຝົນເທິງຫຼັງຄາ, ຫຼືສຽງເດັກນ້ອຍທີ່ກຳລັງຫຼິ້ນຢູ່. ຫຼືອາດຈະເປັນສຽງດົນຕີທີ່ແທ້ຈິງ. ຂ້າພະເຈົ້າຮູ້ສຶກດີໃຈເມື່ອໄດ້ຍິນ ເກີດສວິນ (Gershwin), ໂມສາດ (Mozart), ຫຼື (ເພື່ອຄວາມລຳຄານຂອງພັລຍາຂ້າພະເຈົ້າ) ໂອປຣາ ອາເຣັຽ (opera aria), ແຕ່ເມື່ອສຽງນັ້ນຫາຍໄປ, ແມ່ນຫຍັງທີ່ເຫຼືອໄວ້ໃຫ້ພວກເຮົາ? ພວກເຮົາຍັງຕ້ອງການມັນເພີ່ມຕື່ມອີກ.

ແຕ່ບາງທີປະສົບການໃໝ່ອາດຈະເຮັດໃຫ້ແຕກຕ່າງກັນ. ບໍ່. ການເປັນອັນໃໝ່ແລະສ້າງຂຶ້ນໃໝ່ບໍ່ໄດ້ປ່ຽນສິ່ງໃດໆ. ດັ່ງທີ່ໂຊໂລໂມນໄດ້ກ່າວວ່າ, "*ສິ່ງທີ່ເປັນຂຶ້ນແລ້ວຄືສິ່ງທີ່ຈະເປັນຂຶ້ນອີກ ສິ່ງທີ່ເຮັດແລ້ວຄືສິ່ງທີ່ຈະຕ້ອງເຮັດອີກ ແລະບໍ່ມີສິ່ງໃດໃໝ່ພາຍໃຕ້ດວງຕາເວັນ.*" (ປຍຈ 1:9), ຢ່າໃຫ້ເຮົາລົບຖິ້ມໂຊໂລໂມນຊຶ່ງເປັນຜູ້ນຶ່ງທີ່ສນັບສນູນທັສນະຊາວຕາເວັນອອກ. ສາສນາຊາວຕາເວັນອອກເບິ່ງປວັດສາດເໝືອນເປັນເຣື່ອງຊ້ຳຊ້ອນ, ເປັນວົງຈອນທີ່ບໍ່ມີທີ່ສິ້ນສຸດໂດຍຜ່ານຫຼາຍພັນຄັ້ງຂອງການກັບຊາດມາເກີດໃໝ່. ພວກເຂົາເຈົ້າເບິ່ງຊີວິດຂອງພວກເຮົາຢ່າງໂສກເສົ້າເໝືອນທີ່ໄດ້ກັບຊາດມາເກີດອີກເທື່ອແລ້ວເທື່ອເຫຼົ່າຊ້ຳອີກ, ແລະບາງຄົນເຊື່ອວ່າເຖິງແມ່ນວ່າປວັດສາດທັງໝົດຈະເກີດຂຶ້ນອີກ. ນັ້ນບໍ່ແມ່ນທັສນະຂອງໂຊໂລໂມນ. ບໍ່, ໂຊໂລໂມນໄດ້ກ່າວຢ່າງແຈ່ມແຈ້ງວ່າ: "ເມື່ອສິ່ງຕ່າງໆປ່ຽນໄປຫຼາຍເທົ່າໃດ, ມັນກໍແຮ່ງເປັນແບບດຽວກັນ." ຢ່າປ່ອຍໃຫ້ຜູ້ໂຄສະນາຫຼອກລວງທ່ານ. ບໍລິສັດຈ່າຍເງິນຫຼາຍລ້ານພຍາຍາມເຮັດໃຫ້ພວກເຮົາຮູ້ວ່າຜລິດຕະພັນຂອງພວກເຂົາແມ່ນ "ຂອງໃໝ່ແລະປັບປຸງໃໝ່", ແຕ່ບໍ່ມີຫຍັງໃໝ່ໂດຍພື້ນຖານ. ບາງຄັ້ງຜູ້ຈັດພິມປຶ້ມອອກປຶ້ມທີ່ມີໜ້າປົກໃໝ່, ແລະຍອດຂາຍເພີ່ມຂຶ້ນ. ແມ່ນແຕ່ຜູ້ທີ່ເປັນເຈົ້າຂອງປຶ້ມແລ້ວກໍຈະຊື້ປຶ້ມອີກດ້ວຍໜ້າປົກໃໝ່. ນິວຟແລັສ໌ News-flash ມັນເປັນໜັງສືດຽວກັນ! ພວກເຮົາເຫັນແນວນີ້ໃນທາງອື່ນໆອີກໃນວັທນະທັມ. ຫຼາຍໆເພງແລະຮູບເງົາຂອງພວກເຮົາແມ່ນພຽງແຕ່ ປັບປຸງຈາກຂອງເກົ່າ. ແນວໂນ້ມຂອງແຟຊັນຫຼາຍໆຢ່າງໃນມື້ນີ້ແມ່ນວຽນຮອບມາອັນເກົ່າ. ຈົ່ງເກັບເຄື່ອງນຸ່ງເກົ່າຂອງທ່ານໄວ້; ໃນທີ່ສຸດພວກມັນຈະກັບມາມີຮູບແບບອີກຄັ້ງ. ພວກເຮົາສືບຕໍ່ຖາມຄຳຖາມດຽວກັນຂອງຊີວິດທີ່ຄົນລຸ້ນກ່ອນພວກເຮົາມີ. ຊີວິດກ່ຽວກັບຫຍັງ? ສິ່ງທີ່ຂ້ອຍເຮັດແມ່ນສຳຄັນແນວໃດ? ເຖິງແມ່ນວ່າຈຸດພິເສດຂອງວັທນະທັມອາດຈະມີການປ່ຽນແປງ, ແຕ່ຄົນລຸ້ນຫຼັງຍັງຄົງຕັ້ງຄຳຖາມຄືກັນ. ແລະຖ້າພວກເຮົາສືບຕໍ່ເບິ່ງຊີວິດ "ພາຍໃຕ້ແສງຕາເວັນ," ພວກເຮົາຈະສືບຕໍ່ມາເຖິງຂໍ້ສະຫຼຸບທີ່ຜິດພາດຄືກັນ: ທັງໝົດນີ້ໄຮ້ຜົນ!

*ທ່ານເຫັນຫຼັກຖານຢູ່ໃສວ່າຄົນເຮົາປະສົບກັບຄວາມອິດເມື່ອຍໃນວັທນະທັມຂອງພວກເຮົາ?*

### 3. ປັນຍາຈານ 1:11-14.

*11. ບໍ່ມີການຈື່ຈຳເຖິງສມັຍກ່ອນ ແລະຈະບໍ່ມີການຈົດຈຳສິ່ງຫລັງໆທີ່ຈະເກີດມາທ່າມກາງບັນດາຜູ້ທີ່ມາພາຍຫຼັງ. 12. ຂ້າພະເຈົ້າປັນຍາຈານເຄີຍເປັນກະສັດເໜືອອິສຣາເອນໃນກຸງເຢຣູຊາເລັມ. 13. ຂ້າພະເຈົ້າຕັ້ງໃຈຊອກແລະສແວງຫາໂດຍສະຕິປັນຍາເຖິງສິ່ງສາລະພັດທີ່ເຮັດພາຍໃຕ້ຟ້າສວັນ ເປັນເຣື່ອງຍາກລຳບາກຊຶ່ງພຣະເຈົ້າປະທານໃຫ້ບຸດມະນຸດເຮັດຢູ່ນັ້ນ.*
*14. ຂ້າພະເຈົ້າເຄີຍເຫັນການທັງປວງຊຶ່ງເຂົາເຮັດພາຍໃຕ້ດວງຕາເວັນ ແລະເບິ່ງແມສາລະພັດກໍບໍ່ໄດ້ຜົນຄືກິນລົມກິນແລ້ງ.*

ວິທີນຶ່ງທີ່ຫຼາຍຄົນພຍາຍາມເອົາຄວາມໝາຍເຂົ້າມາສູ່ຊີວິດແມ່ນໂດຍການສ້າງຊື່ສຽງອັນເຂັ້ມແຂງແລະການປະມໍລະດົກໄວ້. ພວກເຮົາຕ້ອງການທີ່ຈະໄດ້ຮັບການຈົດຈຳ! ຂ້າພະເຈົ້າພູມໃຈໃນຕົວພໍ່ສເມີ. ໃນຖານະເປັນນັກວິສະວະກອນກົນຈັກ, ລາວມີສິດທິບັດຫຼາຍອັນໃນຊື່ຂອງລາວ ທີ່ຖືກນຳມາໃຊ້ໃນຝ່າຍນ້ຳມັນ. ຢ່າງໃດກໍຕາມ, ພໍ່ຂອງຂ້າພະເຈົ້າໄດ້ຈາກໄປຫຼາຍ

ກວ່າຊາວຫ້າປີແລ້ວ, ແລະໃນຂະນະທີ່ການປະກອບສ່ວນຂອງລາວຍັງຖືກນຳໃຊ້ຢູ່, ຂ້າພະເຈົ້າກ້າເວົ້າວ່າບໍ່ມີໃຜໃນສາຂາຂອງລາວອາດຈະຈື່ຊື່ຂອງລາວໄດ້. ຂອບພຣະຄຸນ, ພໍ່ຂອງຂ້າພະເຈົ້າບໍ່ໄດ້ເບິ່ງການປະກອບສ່ວນພາຍນອກເຫຼົ່ານີ້ສໍາລັບແຫຼ່ງຈຸດປະສົງຫຼືຄວາມສໍາຄັນຂອງລາວ. ນັ້ນແມ່ນຈຸດທີ່ໂສກເສົ້າຂອງໂຊໂລໂມນໃນຂໍ້ທີ 11: "*ບໍ່ມີການຈື່ຈໍາເຖິງສະໄໝກ່ອນ ແລະຈະບໍ່ມີການຈົດຈໍາສິ່ງຫລັງໆທີ່ຈະເກີດມາທ່າມກາງບັນດາຜູ້ທີ່ມາພາຍຫຼັງ.*" ແຍກຕ່າງຈາກພຣະຄຣິດ, ວຽກງານທັງໝົດທີ່ເຮົາເຮັດໃນຊີວິດນີ້ບໍ່ໄດ້ເພີ່ມຫຍັງໃໝ່ແລະຖືກລືມໄປຢ່າງໄວວາ. ຂ້າພະເຈົ້າຄິດຕລອດແລ້ວວ່າໂຊໂລໂມນໄດ້ຮູ້ຈັກຈຸດປະສົງນີ້ຈະບໍ່ພົບເຫັນຢ່າງແຈ່ມແຈ້ງໃນສິ່ງເຫຼົ່ານີ້. ຈາກສະຕິປັນຍາ, ຄວາມຮູ້, ຄວາມຮັ່ງມີ, ແລະປະສົບການອັນໃຫຍ່ຫຼວງຂອງລາວ, ໂຊໂລໂມນໄດ້ວາງອອກເພື່ອເປີດເຜີຍຄວາມຫວ່າງເປົ່າທັສນະຂອງໂລກໂດຍພຍາຍາມຊອກຫາຄວາມໝາຍຂອງ "ສິ່ງທີ່ເຮັດພາຍໃຕ້ຟ້າສວັນ" (ຂໍ້ 13)-ນັ້ນແມ່ນ, ແຍກຕ່າງຈາກພຣະເຈົ້າ. ສະຫຼຸບຂອງລາວ? ທັງໝົດມັນບໍ່ມີຄວາມໝາຍ, "*ສາລະພັດກໍບໍ່ໄດ້ຜົນຄືກິນລົມກິນແລ້ງ*" (ຂໍ້ 14). ພຣະເຈົ້າເປັນພຣະເຈົ້າທີ່ດີ, ແລະພຣະອົງອະນຸຍາດໃຫ້ສິ່ງເຫຼົ່ານີ້ເຂົ້າໄປໃນຊີວິດຂອງພວກເຮົາຊຶ່ງອອກມາຈາກຄວາມດີຂອງພຣະອົງ. ພຣະເຈົ້າບໍ່ແມ່ນຜູ້ສນັບສນູນຂອງການເປັນຢູ່ທີ່ບໍ່ມີຄວາມສຸກ. ແຕ່ຖ້າພວກເຮົາເບິ່ງສິ່ງເຫຼົ່ານັ້ນເພື່ອຈຸດປະສົງຂອງພວກເຮົາ, ໃນທີ່ສຸດພວກເຮົາຈະສູນເສັຽຈຸດປະສົງຕົ້ນຕໍຂອງພວກເຮົາ. ຂ່າວດີກໍຄືຂ່າວບໍ່ດີຂອງເຮົາຊ່ວຍຊີ້ໃຫ້ເຮົາເຫັນຄວາມຫວັງທີ່ສູງສຸດຂອງພວກເຮົາ. ແຕ່ພວກເຮົາສາມາດຊອກຫາຈຸດປະສົງຂອງພວກເຮົາ, ນັ້ນແມ່ນຈຸດທັງໝົດຂອງການສຶກສານີ້. ຂ່າວດີແມ່ນວ່າທັສນະຂອງພວກເຮົາບໍ່ຈໍາກັດພຽງແຕ່ສິ່ງທີ່ "ຢູ່ພາຍໃຕ້ແສງຕາເວັນ". ພຣະບິດາເທິງສວັນຂອງພວກເຮົາ, ຜູ້ທີ່ຢູ່ເໜືອດວງອາທິດ, ໄດ້ສ້າງໂລກນີ້ໂດຍຜ່ານພຣະຄຣິດແລະສໍາລັບພຣະຄຣິດ (Col. 1:15-17). ພຣະເຈົ້າສ້າງທັງໝົດແມ່ນດີ! ດັ່ງນັ້ນ, ພວກເຮົາສາມາດມີຄວາມສຸກໃນໂລກນີ້, ແລະພວກເຮົາສາມາດມີຄວາມໝັ້ນໃຈວ່າປວັດສາດກໍາລັງກ້າວໄປສູ່ຈຸດກໍານົດສິ້ນສຸດຂອງພຣະເຈົ້າ. ເມື່ອພວກເຮົາສແວງຫາພຣະຄຣິດ, ທຸກສິ່ງທີ່ພວກເຮົາຕ້ອງການຈະຕົກຢູ່ໃນບ່ອນຂອງມັນ.

*ໃນປະສົບການຂອງທ່ານ, ອັນໃດເປັນສ່ວນປະກອບຫຼັກຂອງຊີວິດທີ່ມີຄວາມໝາຍ?*

## ນໍາໃຊ້ໃນຊີວິດ

ທ່ານຈະເຮັດຫຍັງໃນອາທິດນີ້ເພື່ອເບິ່ງຊີວິດຈາກທັສນະຂອງຄຣິສະຕຽນ, ທັສນະຈາກດ້ານເທິງຂອງດວງອາທິດ, ບ່ອນທີ່ພຣະເຈົ້າຜູ້ຊົງສ້າງຂອງພວກເຮົາສະຖິດຢູ່? ເລືອກນຶ່ງໃນການນໍາໃຊ້ໃນຊີວິດຕໍ່ໄປນີ້:

- **ອ່ານເພີ່ມເຕີມ.** ແຍກບາງເວລາເພື່ອອ່ານສ່ວນທີ່ເຫຼືອຂອງພຣະທັມປັນຍາຈານຢ່າງລະມັດລະວັງ. ຂນະທີ່ທ່ານຄຶດຕຶກຕອງເຖິງຖ້ອຍຄໍາຂອງໂຊໂລໂມນ, ຈົ່ງພິຈາລະນາເບິ່ງວ່າພຣະຜູ້ເປັນເຈົ້າກໍາລັງສອນທ່ານແນວໃດ.
- **ຊອກຫາຫົວໃຈຂອງທ່ານ.** ຈົ່ງໃຊ້ເວລາທີ່ງຽບໆຈາກຄວາມຮີບຮ້ອນຂອງຊີວິດ ແລະຂໍໃຫ້ພຣະວິນຍານບໍຣິສຸດຄົ້ນຫາຫົວໃຈຂອງທ່ານດ້ວຍຄໍາຖາມທີ່ວ່າ: ຂ້ອຍຊອກຫາຫຍັງນອກຈາກພຣະເຈົ້າສໍາລັບຄວາມໝາຍໃນຊີວິດຂອງຂ້ອຍ?
- **ແບ່ງປັນຂ່າວປະເສີດ.** ພວກເຮົາຖືກອ້ອມຮອບໄປດ້ວຍຄົນທີ່ບໍ່ມີຈຸດປະສົງ. ຊີ້ພວກເຂົາໄປຫາພຣະຄຣິດ, ຜູ້ທີ່ໃຫ້ຈຸດປະສົງໃນຊີວິດຂອງພວກເຮົາ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ PA**